# ບົດຂ່າວ

## ກອງປະຊຸມທົບທວນຜົນການດຳເນີນທຸລະກິດ ທຄຕລ ປະຈຳປີ 2018 ແລະ ຮັບຮອງແຜນ ປະຈຳປີ 2019

ໃນວັນທີ 07-08 ກຸມພາ 2019, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດ ປະຈຳປີ 2018 ແລະ ຮັບຮອງແຜນ ປະຈຳປີ 2019 ຂຶ້ນທີ່ຫ້ອງປະຊຸມໃຫຍ່ ທຄຕລ ສຳນັກງານໃຫຍ່, ພາຍໃຕ້ການເປັນປະທານ ຂອງ ທ່ານ ພູຂີງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ, ຄະນະອຳນວຍການ ແລະ ຍັງມີບັນດາທ່ານຄະນະພະແນກ, ສູນຈາກສຳນັກງານໃຫຍ່, ຄະນະສາຂາໃນທົ່ວລະບົບ ທຄຕລ ພ້ອມດ້ວຍພະນັກງານກ່ຽວຂ້ອງທັງໝົດ 70 ທ່ານ.




ກອງປະຊຸມ ໄດ້ປະເມີນຜົນການດຳເນີນທຸລະກິດຂອງ ທຄຕລ ໃນຂອບເຂດທົ່ວປະເທດ ໃນໄລຍະປີ 2018 ເຊິ່ງໄດ້ຍົກໃຫ້ເຫັນຜົນສຳເລັດ ແລະ ບັນດາຂໍ້ຄົງຄ້າງໃນການປະຕິບັດງານແຕ່ລະດ້ານ ເພື່ອປຶກສາຫາລືການແກ້ໄຂໃຫ້ດີຂຶ້ນໃນຕໍ່ໜ້າ. ກອງປະຊຸມຄັ້ງນີ້ ຍັງໄດ້ຮັບຮອງເອົາແຜນປະຈຳປີ 2019 ເພື່ອໃຫ້ແຕ່ລະພາກສ່ວນນຳໄປຈັດຕັ້ງປະຕິບັດຢ່າງສຳເລັດຜົນ. ໃນໂອກາດນີ້ ກອງປະຊຸມ ກໍ

ໄດ້ຮັບທິດຊີ້ນໍາຈາກຜູ້ອໍານວຍການ ໃຫຍ່ ທຄຕລ ແລະ ຄະນະອໍານວຍການ ທຄຕລ ໃນການປັບປຸງການປະຕິບັດງານ, ເນັ້ນຫນັກໃຫ້ ທຄຕລ ສືບຕໍ່ຄົ້ນຄວ້າການພັດທະນາປັບປຸງການບໍລິການດ້ວຍການຫັນເປັນທັນສະໄໝດ້ວຍການໃຊ້ເຕັກໂນໂລຊີໃຫ້ຫຼາຍຂຶ້ນ ແລະ ເອົາໃຈໃສ່ໃນການຄຸ້ມຄອງຄວາມສ່ຽງໃນແຕ່ລະດ້ານ ເພື່ອເຮັດໃຫ້ຜົນການດໍາເນີນທຸລະກິດຂອງ ທຄຕລ ມີປະສິດທິພາບ ແລະ ສາມາດບັນລຸຜົນການດໍາເນີນທຸລະກິດ ຕາມແຜນການທີ່ວາງໄວ້.



ຈາກການລາຍງານ-ປຶກສາຫາລື ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ໄດ້ເຮັດໃຫ້ກອງປະຊຸມມີບັນຍາກາດຟົດຟື້ນ ແລະ ມີປະສິດທິຜົນດີຕະຫຼອດ 2 ວັນ. ໃນປີ 2018 ເຫັນໄດ້ວ່າຜົນການດໍາເນີນທຸລະກິດໄດ້ຕາມແຜນການທີ່ວາງໄວ້.

ນອກຈາກນັ້ນ ກ່ອນໜ້າການດໍາເນີນກອງປະຊຸມທົບທວນເທື່ອນີ້ ໃນວັນທີ 06 ກຸມພາ 2019 ທຄຕລ ກໍ່ຍັງໄດ້ຈັດກອງປະຊຸມແລກປ່ຽນບົດຮຽນກ່ຽວກັບວຽກງານກວດກາໃຫ້ຄະນະພະແນກ ແລະ ສາຂາຂອງ ທຄຕລ ໄດ້ເຂົ້າໃຈ ກ່ຽວກັບວຽກງານກວດກາ ພ້ອມທັງໄດ້ຍົກບັນດາຂໍ້ພົບເຫັນຕ່າງໆ ເພື່ອໃຫ້ແຕ່ລະພາກສ່ວນມີການຖອດຖອນບົດຮຽນ ແລະ ແກ້ໄຂປັບປຸງໃຫ້ດີຂຶ້ນ.